ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສໍານັກງານນາຍົກລັດຖະມົນຕີ

ເລກທີ 363 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 19.08.2010

1932
24 AUG 2010

# ດໍາລັດ

## ວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ1508/ອຄ.ນຄຕ, ລົງວັນທີ 6 ສິງຫາ 2010.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດໍາລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ກໍານົດຫຼັກການ ແລະ ລະບຽບການກ່ຽວກັບການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ລວມທັງ ດ້ານສຸຂານາໄມ-ສຸຂານາໄມພືດ, ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ການຄ້າດ້ານການບໍລິການ ແລະ ຂໍ້ມູນທີ່ຕິດພັນກັບການຄ້າອື່ນໆ ແນໃສ່ຊຸກຍູ້ສົ່ງເສີມການເຂົ້າເຖິງ ແລະ ມີສ່ວນຮ່ວມໃນການສ້າງ ແລະ ນໍາໃຊ້ມາດຕະການທີ່ຕິດພັນກັບການຄ້າ ເພື່ອຫຼີກເວັ້ນການຈໍາແນກ ແລະ ການສ້າງອຸປະສັກທີ່ບໍ່ຈໍາເປັນຕໍ່ການຄ້າ.

**ມາດຕາ 2. ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1) **ຂໍ້ມູນທີ່ຕິດພັນກັບການຄ້າ** ໝາຍເຖິງຂໍ້ມູນກ່ຽວກັບມາດຕະການດ້ານສຸຂານາໄມ-ສຸຂານາໄມພືດ, ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ການຄ້າດ້ານການບໍລິການ ແລະ ອື່ນໆ.
2) **ມາດຕະການ** ໝາຍເຖິງ ກົດໝາຍ, ລະບຽບການ ແລະ ຂັ້ນຕອນ ທີ່ກໍາລັງຮ່າງ, ຖືກຮັບຮອງ ແລະ ນໍາໃຊ້ໃນຂອບເຂດທົ່ວປະເທດ ແລະ ຂໍ້ມູນການເປັນສະມາຊິກ ແລະ ມີສ່ວນຮ່ວມໃນອົງການຈັດຕັ້ງພາກພື້ນ ແລະ ສາກົນ;
3) **ສຸຂານາໄມ** ໝາຍເຖິງ ຄວາມສະອາດ, ການມີອະນາໄມ ແລະ ຄວາມປອດໄພຈາກຄວາມສ່ຽງອື່ນໆ ທີ່ມີຜົນເສຍຕໍ່ສຸຂະພາບຂອງຄົນ ແລະ ສັດ;
4) **ສຸຂານາໄມພືດ** ໝາຍເຖິງ ການເຮັດໃຫ້ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນມີຄວາມສະອາດ ແລະ ປອດໄພຈາກສັດຕູພືດ;

5) **ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ** ໝາຍເຖິງ ລະບຽບການກ່ຽວກັບເຕັກນິກ, ມາດຕະຖານ ແລະ ການປະເມີນຄວາມສອດຄ່ອງທາງດ້ານເຕັກນິກ ເພື່ອຮັບປະກັນຄວາມປອດໄພດ້ານສຸຂະພາບ, ປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມໝັ້ນຄົງຂອງຊາດ;

6) **ການແຈ້ງຂໍ້ມູນ** ໝາຍເຖິງ ການແຈ້ງມາດຕະການທີ່ຕິດພັນກັບການຄ້າ ໄປຍັງອົງການຈັດຕັ້ງພາກພື້ນ ແລະ ສາກົນ ລວມທັງອົງການການຄ້າໂລກ ເພື່ອຮັບຊາບ ແລະ ມີສ່ວນຮ່ວມໃນການປະກອບຄໍາເຫັນພາຍໃນໄລຍະເວລາທີ່ເໝາະສົມ;

7) **ການສະໜອງຂໍ້ມູນ** ໝາຍເຖິງການຕອບຄໍາຖາມ ແລະ ສະໜອງຂໍ້ມູນທີ່ຕິດພັນກັບການຄ້າຂອງ ສປປ ລາວ ແລະ ຕ່າງປະເທດ ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງພາກພື້ນ ແລະ ສາກົນທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 3. **ຫຼັກການພື້ນຖານ**

ການແຈ້ງ ແລະ ການສະໜອງຂໍ້ມູນ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1) ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແລະ ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ;

2) ມີຄວາມໂປ່ງໃສ, ຍຸຕິທໍາ, ຄວາມສະເໝີພາບ, ຫລີກເວັ້ນການຈໍາແນກ ແລະ ການສ້າງອຸປະສັກທີ່ບໍ່ຈໍາເປັນຕໍ່ການຄ້າ;

3) ຮັບປະກັນຄວາມຖືກຕ້ອງຊັດເຈນ, ເຊື່ອຖືໄດ້ ແລະ ທັນກັບເວລາໃນການເຜີຍແຜ່, ສະໜອງ ແລະ ແຈ້ງຂໍ້ມູນ;

4) ມີສ່ວນຮ່ວມໃນການປະກອບຄໍາເຫັນຕໍ່ຮ່າງມາດຕະການສຸຂານາໄມ, ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ໂດຍພາກສ່ວນທີ່ສົນໃຈທັງພາຍໃນ ແລະ ຕ່າງປະເທດກ່ອນຈະຮັບຮອງ ພາຍໃນໄລຍະເວລາທີ່ເໝາະສົມ ໂດຍຢ່າງໜ້ອຍ 60 ວັນ, ຍົກເວັ້ນກໍລະນີຈໍາເປັນ ແລະ ຮີບດ່ວນ ແຕ່ຕ້ອງແຈ້ງໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ;

5) ມີການເຜີຍແຜ່ມາດຕະການສຸຂານາໄມ, ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຢ່າງໜ້ອຍ 180 ວັນ ກ່ອນຈະມີຜົນບັງຄັບໃຊ້, ສໍາລັບການປະຕິບັດໃນກໍລະນີຈໍາເປັນ ແລະ ຮີບດ່ວນໃຫ້ຂະແໜງການກ່ຽວຂ້ອງກໍານົດເປັນລະບຽບການຕ່າງຫາກ.

## ໝວດທີ II
## ການແຈ້ງ ແລະ ການສະໜອງຂໍ້ມູນ

ມາດຕາ 4. **ການແຈ້ງຂໍ້ມູນທີ່ຕິດພັນກັບການຄ້າ**

ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າເປັນໃຈກາງກ່ຽວກັບວຽກງານການແຈ້ງຂໍ້ມູນທີ່ຕິດພັນກັບການຄ້າ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ມີພາລະບົດບາດໃນການປະສານງານ, ສັງລວມ ແລະ ແຈ້ງຂໍ້ມູນທີ່ຕິດພັນກັບການຄ້າ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໄປຍັງອົງການຈັດຕັ້ງພາກພື້ນ ແລະ ສາກົນ ລວມທັງອົງການການຄ້າໂລກ.

**ມາດຕາ 5. ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ**

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງກ່ຽວກັບວຽກງານການສະໜອງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ໂດຍປະສານສົມທົບກັບຂະແໜງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ມີພາລະບົດບາດໃນການປະສານງານ, ສັງລວມ ແລະ ສະໜອງຂໍ້ມູນມາດຕະການດັ່ງກ່າວ ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງພາກພື້ນ ແລະ ສາກົນ ທັງພາຍໃນ ແລະ ຕ່າງປະເທດ.

ມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດເປັນໃຈກາງກ່ຽວກັບວຽກງານການສະໜອງຂໍ້ມູນສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ໂດຍປະສານສົມທົບກັບຂະແໜງ ການທີ່ກ່ຽວຂ້ອງ ທັງໃນຂັ້ນສູນກາງ, ທ້ອງຖິ່ນ ແລະ ມີພາລະບົດບາດໃນການປະສານງານ, ສັງລວມ, ສະໜອງຂໍ້ມູນມາດຕະການດັ່ງກ່າວ ແກ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກພື້ນ ແລະ ສາກົນທັງພາຍໃນ ແລະ ຕ່າງປະເທດ.

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າເປັນໃຈກາງກ່ຽວກັບວຽກງານການສະໜອງຂໍ້ມູນການຄ້າດ້ານການບໍລິການ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ມີພາລະບົດບາດໃນການປະສານງານ, ສັງລວມ ແລະ ສະໜອງຂໍ້ມູນມາດຕະການດັ່ງກ່າວ ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການ ຈັດຕັ້ງພາກພື້ນ ແລະ ສາກົນທັງພາຍໃນ ແລະ ຕ່າງປະເທດ.

## ໝວດທີ III
## ບົດບັນຍັດສຸດທ້າຍ

**ມາດຕາ 6. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ໂດຍປະສານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກຂໍ້ກຳນົດລະອຽດກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ, ກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ ແລະ ບຸກຄະລາກອນທີ່ສັງກັດໃນຂະແໜງການຂອງຕົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ຂະແໜງອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ສາທາລະນະສຸກ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 7. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງ 60 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ